# ຂໍ້ຄວາມ Apple Health

ນັບຕັ້ງແຕ່ເດືອນພຶດສະພາຂອງປີ 2023, ອົງການດູແລສຸຂະພາບ (HCA) ສົ່ງຂໍ້ຄວາມໄປຫາລູກຄ້າເພື່ອແຈ້ງໃຫ້ພວກເຂົາດໍາເນີນການຕໍ່ສັນຍາໃຫ້ສໍາເລັດ ເພື່ອທີ່ຈະຮັບການປະກັນຢ່າງຕໍ່ເນື່ອງ.

HCA ຍັງສົ່ງຂໍ້ຄວາມໂດຍຕາງໜ້າໃຫ້ແກ່ກະຊວງບໍລິການສັງຄົມ ແລະ ສຸຂະພາບ (DSHS) ໄປຫາລູກຄ້າທີ່ຈໍາເປັນຕ້ອງສົ່ງການກວດສອບເງື່ອນໄຂສິດ.

## Apple Health (Medicaid)

ການຄຸ້ມຄອງ Apple Health ລວມເຖິງບຸກຄົນທີ່:

- ຜູ້ໃຫຍ່ທີ່ມີອາຍຸ 19 ຫາ 64 ປີ.
- ສະໝັກຂໍສໍາລັບເດັກນ້ອຍ
- ພໍ່ແມ່ ຫຼື ຜູ້ດູແລສຸຂະພາບທີ່ສະໝັກຂໍກັບເດັກນ້ອຍ.
- ຄົນຖືພາ ຫຼື ສະໝັກຂໍສໍາລັບຄົນທີ່ຖືພາ.

### ຂໍ້ຄວາມ

ລູກຄ້າຂອງ Apple Health ອາດໄດ້ຮັບຂໍ້ຄວາມດັ່ງຕໍ່ໄປນີ້ ຖ້າມັນຮອດເວລາໃນການຕໍ່ສັນຍາການຄຸ້ມຄອງຂອງພວກເຂົາ.

| |
|---|
| **Apple Health (Medicaid): ຄວາມຖີ່ຂອງຂໍ້ຄວາມມີຄວາມແຕກຕ່າງກັນ. ຂໍ້ຄວາມ ແລະ ອັດຕາດາຕາອາດຖືກນໍາໃຊ້..ຕອບກັບ STOP ເພື່ອເລືອກອອກຈາກການບໍລິການ. ສໍາລັບຄວາມຊ່ວຍເຫຼືອ ຫຼື ເພື່ອເບິ່ງ T&C, ກະລຸນາເຂົ້າເບິ່ງ hca.wa.gov/text** |
| **ມັນຮອດເວລາທີ່ຈະຕໍ່ສັນຍາການຄຸ້ມຄອງ Apple Health ເພື່ອຍັງຮັບການປະກັນ. ເຂົ້າເບິ່ງ wahealthplanfinder.org ກ່ອນຮອດທ້າຍເດືອນ.** |

### ຂ້າພະເຈົ້າຈະດໍາເນີນການຕໍ່ສັນຍາຂອງຂ້າພະເຈົ້າໃຫ້ສໍາເລັດໄດ້ແນວໃດ?

ມີຫຼາຍຕົວເລືອກເພື່ອຕໍ່ສັນຍາການຄຸ້ມຄອງ:

- **ອອນລາຍ**: ໄປທີ່ Washington Healthplanfinder.
- **ແອັບມືຖື:** ດາວໂຫຼດ WAPlanfinder app.
- **ໂທລະສັບ**: ໂທຫາສູນຊ່ວຍເຫຼືອລູກຄ້າ Washington Healthplanfinder ທີ່ 1-855-923-4633.
- **ເຈ້ຍ**: ສົ່ງ ແບບສະໝັກສໍາລັບການຄຸ້ມຄອງສຸຂະພາບ (18-001P).
- **ຊ່ອງໜ້າ**: ຄົນຊ່ວຍເຫຼືອໃນທ້ອງຖິ່ນສາມາດຊ່ວຍໃຫ້ລູກຄ້າສະໝັກຂໍການຄຸ້ມຄອງສຸຂະພາບ ໂດຍບໍ່ເສຍຄ່າເພີ່ມເຕີມ. ການຊ່ວຍເຫຼືອໃນການລົງທະບຽນໃນທ້ອງຖິ່ນ | ແຜ່ນທີ່

ຮຽນຮູ້ເພີ່ມເຕີມກ່ຽວກັບ ການຕໍ່ສັນຍາການຄຸ້ມຄອງ.

## Classic Medicaid

ການຄຸ້ມຄອງ Classic Medicaid ລວມເຖິງບຸກຄົນທີ່:

- ຜູ້ໃຫຍ່ທີ່ອາຍຸ 65 ປີ ຫຼື ຫຼາຍກວ່ານັ້ນ.
- ມີອາການຕາບອດ ຫຼື ຄວາມພິການ.
- ມີສິດສໍາລັບ Medicare.
- ຕ້ອງການການບໍລິການ ຫຼື ການຊ່ວຍເຫຼືອໄລຍະຍາວ.

**ຂ້າພະເຈົ້າໄດ້ຮັບການຄຸ້ມຄອງດູແລສຸຂະພາບຜ່ານ DSHS.** ເປັນຫຍັງ HCA ຈຶ່ງສົ່ງຂໍ້ຄວາມຫາຂ້າພະເຈົ້າ?

HCA ຄືໜ່ວຍງານ Medicaid ຂອງລັດວໍຊິງຕັນ ແລະ ພວກເຮົາກໍາລັງສົ່ງຂໍ້ຄວາມໂດຍຕາງໜ້າໃຫ້ແກ່ DSHS. DSHS ຄຸ້ມຄອງ Medicaid, ຍັງຖືກເອີ້ນວ່າ Classic Medicaid, ສໍາລັບຜູ້ຄົນທີ່ມີອາຍຸຫຼາຍກວ່າ 65 ປີ, ໄດ້ຮັບ Medicare ຫຼື ມີຄວາມພິການ ຫຼື ພາວະຕາບອດ.

**ຂໍ້ຄວາມ**

ລູກຄ້າ Classic Medicaid ທີ່ໄດ້ຮັບການຄຸ້ມຄອງຜ່ານ DSHS ອາດໄດ້ຮັບຂໍ້ຄວາມດັ່ງຕໍ່ໄປນີ້ ຖ້າມັນຮອດເວລາທີ່ຈະຕໍ່ສັນຍາການຄຸ້ມຄອງຂອງພວກເຂົາ.

| |
|---|
| **Apple Health (Medicaid): ຄວາມຖີ່ຂອງຂໍ້ຄວາມມີຄວາມແຕກຕ່າງກັນ. ຂໍ້ຄວາມ ແລະ ອັດຕາດາຕາອາດຖືກນຳໃຊ້. ຕອບກັບ STOP ເພື່ອເລືອກອອກຈາກການບໍລິການ. ສຳລັບຄວາມຊ່ວຍເຫຼືອ ຫຼື ເພື່ອເບິ່ງ T&C, ກະລຸນາເຂົ້າເບິ່ງ hca.wa.gov/texts** |
| **ມັນຮອດເວລາທີ່ຈະດຳເນີນການກວດສອບເງື່ອນໄຂສິດ DSHS ໃຫ້ສຳເລັດເພື່ອຮັບການປະກັນຢ່າງຕໍ່ເນື່ອງ. ເຂົ້າເບິ່ງ washingtonconnection.org ເພື່ອຕໍ່ສັນຍາກ່ອນຮອດທ້າຍເດືອນ.** |

**ຂ້າພະເຈົ້າຈະດຳເນີນການກວດສອບເງື່ອນໄຂສິດຂອງຂ້າພະເຈົ້າໃຫ້ສຳເລັດໄດ້ແນວໃດ?**

ມີຫຼາຍຕົວເລືອກເພື່ອຕໍ່ສັນຍາການຄຸ້ມຄອງ:

- **ອອນລາຍ:** ໄປທີ່ Washington Connection.
- **ເຈ້ຍ:** ສົ່ງ ແບບສະໝັກສຳລັບການຄຸ້ມຄອງດູແລສຸຂະພາບຄົນສູງອາຍຸ, ຄົນຕາບອດ, ຄົນພິການ/ໄລຍະຍາວ (HCA 18-005).
- **ໂທລະສັບ:** ຮ້ອງຂໍການສະໝັກໂດຍໂທຫາ 1-877-501-2233.
- **ຊ່ອງໜ້າ:** ເຂົ້າພົບສຳນັກງານກະຊວງບໍລິການສັງຄົມ ແລະ ສຸຂະພາບ (DSHS) ໃນທ້ອງຖິ່ນ.
  - ສຳລັບການຄຸ້ມຄອງຄົນສູງອາຍຸ, ຄົນຕາບອດ ຫຼື ຄົນພິການ: ສຳນັກງານບໍລິການຊຸມຊົນ DSHS
  - ສຳລັບການບໍລິການ ແລະ ການຊ່ວຍເຫຼືອໄລຍະຍາວ: ສຳນັກງານບໍລິການເຮືອນ ແລະ ຊຸມຊົນ

ຮຽນຮູ້ເພີ່ມເຕີມກ່ຽວກັບ ການຕໍ່ສັນຍາການຄຸ້ມຄອງ.

## ການປ່ຽນເປັນ Classic Medicaid ຫຼື Medicare

**ຂໍ້ຄວາມ**

ລູກຄ້າທີ່ປ່ຽນເປັນການຄຸ້ມຄອງ Classic Medicaid ຫຼື Medicare ອາດໄດ້ຮັບຂໍ້ຄວາມດັ່ງຕໍ່ໄປນີ້ ຖ້າ◌າມັນຮອດເວລາທີ່ຈະປ່ຽນການຄຸ້ມຄອງຂອງພວກເຂົາ ແລະ ສະໝັກດ້ວຍ DSHS. ສິ່ງນີ້ເກີດຂຶ້ນເມື່ອລູກຄ້າອາຍຸເຂົ້າ 65 ປີ ຫຼື ເລີ່ມມີສິດສຳລັບ Medicare.

| |
|---|
| **Apple Health (Medicaid): ຄວາມຖີ່ຂອງຂໍ້ຄວາມມີຄວາມແຕກຕ່າງກັນ. ຂໍ້ຄວາມ ແລະ ອັດຕາດາຕາອາດຖືກນຳໃຊ້. ຕອບກັບ STOP ເພື່ອເລືອກອອກຈາກການບໍລິການ. ສຳລັບຄວາມຊ່ວຍເຫຼືອ ຫຼື ເພື່ອເບິ່ງ T&C, ກະລຸນາເຂົ້າເບິ່ງ hca.wa.gov/help** |
| **ດຳເນີນການໃນຕອນນີ້ເພື່ອສະໝັກຂໍໂຄງການປະຢັດເງິນຂອງ Medicaid ຫຼື Medicare. ເຂົ້າເບິ່ງ washingtonconnection.org ເພື່ອຕໍ່ສັນຍາກ່ອນຮອດທ້າຍເດືອນ.** |

**ຂ້າພະເຈົ້າຈະສະໝັກຂໍ Classic Medicaid ຫຼື Medicare ໄດ້ແນວໃດ?**

ມີຫຼາຍຕົວເລືອກເພື່ອສະໝັກຂໍການຄຸ້ມຄອງ:

- **ອອນລາຍ:** ໄປທີ່ Washington Connection.
- **ເຈ້ຍ:** ສົ່ງ ແບບສະໝັກສຳລັບການຄຸ້ມຄອງສຸຂະພາບຄົນສູງອາຍຸ, ຄົນພິການ/ໄລຍະຍາວ (HCA 18-005).
- **ໂທລະສັບ:** ຮ້ອງຂໍການສະໝັກໂດຍໂທຫາ 1-877-501-2233.
- **ຊ່ອງໜ້າ:** ເຂົ້າພົບສຳນັກງານກະຊວງບໍລິການສັງຄົມ ແລະ ສຸຂະພາບ (DSHS) ໃນທ້ອງຖິ່ນ.
  - ສຳລັບການຄຸ້ມຄອງຄົນສູງອາຍຸ, ຄົນຕາບອດ ຫຼື ຄົນພິການ: ສຳນັກງານບໍລິການຊຸມຊົນ DSHS
  - ສຳລັບການບໍລິການ ແລະ ການຊ່ວຍເຫຼືອໄລຍະຍາວ: ສຳນັກງານບໍລິການເຮືອນ ແລະ ຊຸມຊົນ

ຮຽນຮູ້ເພີ່ມເຕີມກ່ຽວກັບ ການຕໍ່ສັນຍາການຄຸ້ມຄອງ.

# ຄຳຖາມທີ່ຖາມຢູ່ເລື້ອຍໆ

## ເປັນຫຍັງຂ້າພະເຈົ້າຈຶ່ງໄດ້ຮັບຂໍ້ຄວາມນີ້?

ປະຫວັດຂອງພວກເຮົາໄດ້ສະແດງໃຫ້ເຫັນວ່າທ່ານ ຫຼື ຕົວແທນທີ່ມີອຳນາດ (AREP) ຂອງທ່ານມອບໝາຍເລກໂທລະສັບຂອງທ່ານໃຫ້ແກ່ພວກເຮົາ. ພວກເຮົາຕ້ອງການໃຫ້ທ່ານ ຫຼື AREP ຂອງທ່ານດຳເນີນການຕໍ່ສັນຍາຂອງທ່ານໃຫ້ສຳເລັດເພື່ອຮັບການປະກັນຢ່າງຕໍ່ເນື່ອງ. ຖ້າໃນຕອນນີ້, ທ່ານໄດ້ຮັບໝາຍເລກໂທລະສັບນີ້ ແລະ ບໍ່ແມ່ນລູກຄ້າ Apple Health ຫຼື Medicaid, ທ່ານອາດບໍ່ສົນໃຈຂໍ້ຄວາມ ແລະ ເລືອກອອກຈາກການບໍລິການ.

## ຂໍ້ຄວາມມາຈາກໝາຍເລກຫຍັງ?

HCA ກຳລັງສົ່ງຂໍ້ຄວາມຈາກ 888-689-5016.

## ຖ້າຂ້າພະເຈົ້າບໍ່ມີການຄຸ້ມຄອງຈາກ Apple Health ຫຼື Classic Medicaid ເດ?

ຖ້າທ່ານບໍ່ມີ Apple Health ຫຼື Classic Medicaid, ພວກເຮົາມີແນວໂນ້ມທີ່ຈະມີໝາຍເລກໂທລະສັບທີ່ຫຼ້າຫຼັງ ຫຼື ບໍ່ຖືກຕ້ອງສຳລັບຄົນທີ່ມີ. ທ່ານບໍ່ມີການດຳເນີນການໃດໜຶ່ງ ແລະ ສາມາດຕອບກັບ “STOP” ເພື່ອທີ່ຈະບໍ່ຕ້ອງຮັບຂໍ້ຄວາມເພີ່ມເຕີມ.

ທ່ານມີ Apple Health ຖ້າທ່ານມີການບໍລິການ ProviderOne ທີ່ເປີດໃຊ້ງານ ຫຼື ຖືກມອບໝາຍໃຫ້ແຜນການດູແລສຸຂະພາບທີ່ຢູ່ໃນການຄຸ້ມຄອງ. ແຜນການດູແລສຸຂະພາບທີ່ຢູ່ໃນການຄຸ້ມຄອງແມ່ນ:

- ແຜນປະກັນອາເມຣິກຣຸບວໍຊິງຕັນ (Amerigroup Washington)
- ແຜນດູແລສຸຂະພາບແບບປະສານແຫ່ງລັດວໍຊິງຕັນ (Coordinated Care of Washington)
- ແຜນປະກັນສຸຂະພາບຊຸມຊົນແຫ່ງລັດວໍຊິງຕັນ (Community Health Plan of Washington)
- ແຜນດູແລສຸຂະພາບໂມລີນາແຫ່ງລັດວໍຊິງຕັນ (Molina Healthcare of Washington)
- ແຜນປະກັນຊຸມຊົນຢູໄນເຕັດແຮວແຄ (UnitedHealthcare Community Plan)

## ຂ້າພະເຈົ້າຈະໄດ້ຮັບຂໍ້ຄວາມຫຼາຍສໍ່າໃດ?

ໃນຕອນນີ້, ພວກເຮົາພຽງແຕ່ສົ່ງຂໍ້ຄວາມ ເມື່ອຄົນໃດໜຶ່ງໃນຄົວເຮືອນບໍ່ໄດ້ສົ່ງການຕໍ່ສັນຍາທີ່ຈຳເປັນ ຫຼື ການກວດສອບເງື່ອນໄຂສິດ. ຖ້າທ່ານເລືອກອອກຈາກການບໍລິການໃນການໄດ້ຮັບຂໍ້ຄວາມຈາກແຜນການດູແລສຸຂະພາບທີ່ຢູ່ໃນການຄຸ້ມຄອງຂອງທ່ານ, ພວກເຂົາອາດສົ່ງຂໍ້ຄວາມໄປຫາທ່ານ.

## ຖ້າຂ້າພະເຈົ້າບໍ່ຕ້ອງການຂໍ້ຄວາມເພີ່ມເຕີມເດ?

ຕອບກັບຂໍ້ຄວາມດ້ວຍ “STOP” ເພື່ອທີ່ຈະບໍ່ຮັບຂໍ້ຄວາມອີກຕໍ່ໄປ.

## ຂ້າພະເຈົ້າໄດ້ຮັບຂໍ້ຄວາມທີ່ລະບຸວ່າຂ້າພະເຈົ້າຕ້ອງຈ່າຍຜ່ານໂທລະສັບເພື່ອຮັກສາການຄຸ້ມຄອງຂອງຂ້າພະເຈົ້າ. ນັ້ນຄືຄວາມຈິງບໍ?

HCA, DSHS ແລະ Washington Healthplanfinder ຈະບໍ່ຂໍເງິນເພື່ອລົງທະບຽນ ຫຼື ລົງທະບຽນໃນການຄຸ້ມຄອງ Apple Health ຄືນໃໝ່ຈັກເທື່ອ. ນັກຫຼອກລວງກຳລັງສົ່ງຂໍ້ຄວາມ ແລະ ໂທຫາລູກຄ້າ ແລ້ວອ້າງວ່າພວກເຂົາຕ້ອງຈ່າຍເງິນເພື່ອຕໍ່ສັນຍາການຄຸ້ມຄອງ Medicaid ຂອງພວກເຂົາ. ຢ່າແບ່ງປັນຂໍ້ຄວາມທະນາຄານ ຫຼື ບັດເຄຣດິດກັບຄົນໃດໜຶ່ງທີ່ອ້າງຕົວວ່າມາຈາກ HCA, DSHS ຫຼື Apple Health.

ຖ້າທ່ານໄດ້ຮັບສາຍໂທລະສັບ ຫຼື ຂໍ້ຄວາມທີ່ທ່ານຄິດວ່າເປັນການຫຼອກລວງ, ກະລຸນາວາງສາຍ ແລະ ຢ່າຕອບກັບ. ທ່ານອາດລາຍງານຄຳຮ້ອງທຸກການກະທຳທີ່ອາດເປັນການສໍ້ໂກງໄປຫາ HCA ໂດຍ:

- ອີເມວ: WAHeligibilityfraud@hca.wa.gov
- ຂໍ້ຄວາມສຽງ: (360) 725-0934
- ແຟັກ: (360) 725-1158, Attn: WA Apple Health Fraud

## ຂ້າພະເຈົ້າຈະຕິດຕໍ່ຜູ້ໃດ ເມື່ອມີຄຳຖາມ?

**Apple Health (Medicaid)**: ຖ້າທ່ານອາຍຸຕໍ່າກວ່າ 65, ມີລູກ ຫຼື ຖືພາ, ກະລຸນາໂທຫາສູນບໍລິການລູກຄ້າການຊ່ວຍເຫຼືອທາງການແພດ HCA ທີ່ 1-800-562-3022 ຫຼື ສົ່ງອີເມວຫາ askmagi@hca.wa.gov.

**Classic Medicaid**: ຖ້າທ່ານອາຍຸ 65 ປີ ແລະ ຫຼາຍກວ່ານັ້ນ, ໄດ້ຮັບ Medicare ຫຼື ເປັນບຸກຄົນທີ່ຕາບອດ ຫຼື ພິການ, ກະລຸນາໂທຫາສູນບໍລິການລູກຄ້າ DSHS ທີ່ 1-877-501-2233.

# ຂໍ້ກຳນົດ ແລະ ເງື່ອນໄຂໄຮ້ສາຍ ແລະ ນະໂຍບາຍຄວາມເປັນສ່ວນຕົວ

ທ່ານໄດ້ລົງທະບຽນເພື່ອຮັບຂໍ້ຄວາມໄຮ້ສາຍຈາກອົງການດູແລສຸຂະພາບຂອງລັດວໍຊິງຕັນ.
ໂດຍການສະໝັກເປັນສະມາຊິກໃນການບໍລິການແຈ້ງເຕືອນນີ້, ທ່ານເຫັນດີທີ່ຈະປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂ.
ເພື່ອເຊົາຮັບຂໍ້ຄວາມ, ກະລຸນາສົ່ງຂໍ້ຄວາມ STOP ເພື່ອຍົກເລີກການສະໝັກເປັນສະມາຊິກ. ສໍາລັບການຊ່ວຍເຫຼືອ, ກະລຸນາສົ່ງຂໍ້ຄວາມ HELP.

ຜູ້ໃຫ້ບໍລິການໄຮ້ສາຍສ່ວນໃຫຍ່ໃຫ້ການບໍລິການສົ່ງຂໍ້ຄວາມ.
ໃນຂະນະທີ່ບໍ່ມີການເກັບເງິນເພື່ອລົງທະບຽນສໍາລັບການອັບເດດໄຮ້ສາຍ,
ຜູ້ໃຫ້ບໍລິການໄຮ້ສາຍຂອງທ່ານອາດຮຽກເກັບເງິນສໍາລັບຂໍ້ຄວາມ.
ກວດເບິ່ງກັບຜູ້ໃຫ້ບໍລິການຂອງທ່ານສໍາລັບລາຍລະອຽດກ່ຽວກັບຄ່າໃຊ້ຈ່າຍເພີ່ມເຕີມ.

## ຂໍ້ກຳນົດ ແລະ ເງື່ອນໄຂ

### ນະໂຍບາຍຜູ້ໃຊ້

ອົງການດູແລສຸຂະພາບຂອງລັດວໍຊິງຕັນຈະບໍ່ແບ່ງປັນ ຫຼື
ນໍາໃຊ້ໝາຍເລກມືຖືຂອງທ່ານສໍາລັບຈຸດປະສົງອື່ນໆທີ່ນອກເໜືອຈາກການອັບເດດຈາກລູກຄ້າທີ່ຄັດເລືອກ.

### ຄ່າທໍານຽມຜູ້ໃຊ້

ອົງການດູແລສຸຂະພາບຂອງລັດວໍຊິງຕັນບໍ່ຮຽກເກັບເງິນຈາກຜູ້ຮັບເພື່ອຮັບຂໍ້ຄວາມ. ເຖິງຢ່າງໃດກໍຕາມ, ຂໍ້ຄວາມ ແລະ ອັດຕາດາຕາອາດຖືກນໍາໃຊ້.

### ຄວາມຖີ່

ຄວາມຖີ່ຂອງຂໍ້ຄວາມມີຄວາມແຕກຕ່າງກັນ.

### ການເລືອກອອກຈາການບໍລິການ

ເພື່ອເລືອກອອກຈາກການບໍລິການ (ຢຸດຮັບຂໍ້ຄວາມ), ກະລຸນາຕອບກັບ STOP ຈາກອຸປະກອນມືຖືຂອງທ່ານ.
ພວກເຮົາຈະຢືນຢັນການເລືອກອອກຈາກການບໍລິການຂອງທ່ານໂດຍຂໍ້ຄວາມ ແລະ
ທ່ານຈະບໍ່ໄດ້ຮັບຂໍ້ຄວາມເພີ່ມເຕີມຈາກອົງການດູແລສຸຂະພາບຂອງລັດວໍຊິງຕັນ
ເວັ້ນເສຍແຕ່ວ່າທ່ານຈະເລືອກອອກຈາກບໍການລິການຂອງທ່ານອີກຄັ້ງ.

### ການຮັບປະກັນ

ອົງການດູແລສຸຂະພາບຂອງລັດວໍຊິງຕັນບໍ່ຮັບຜິດຊອບສໍາລັບການຊັກຊ້າໃດໜຶ່ງໃນການຮັບຂໍ້ຄວາມ SMS
ທີ່ເຊື່ອມໂຍງກັບໂຄງການນີ້. ການຈັດສົ່ງຂໍ້ຄວາມ SMS
ແມ່ນຂຶ້ນກັບການສົ່ງຢ່າງມີປະສິດທິພາບຈາກຜູ້ໃຫ້ບໍລິການໄຮ້ສາຍ/ຜູ້ດໍາເນີນເຄືອຂ່າຍຂອງທ່ານ.
ບໍລິສັດບໍ່ຮັບຜິດຊອບສໍາລັບຂໍ້ຄວາມທີ່ຊັກຊ້າ ຫຼື ບໍ່ໄດ້ຈັດສົ່ງ.

### ຄໍາອະທິບາຍກໍລະນີນໍາໃຊ້

ອົງການດູແລສຸຂະພາບຂອງລັດວໍຊິງຕັນຈະສົ່ງຂໍ້ຄວາມ SMS ທີ່ກ່ຽວຂ້ອງກັບຂໍ້ມູນ ແລະ
ການແຈ້ງເຕືອນກ່ຽວກັບການບໍລິການຂອງລັດຖະບານທີ່ສະໜອງໃຫ້ໂດຍອົງການດູແລສຸຂະພາບຂອງລັດວໍຊິງຕັນ.

## ມີຄໍາຖາມບໍ?

ຖ້າທ່ານມີຄໍາຖາມ ຫຼື ບັນຫາ ຫຼື ຕ້ອງການຄວາມຊ່ວຍເຫຼືອ, ກະລຸນາຕິດຕໍ່ support@granicus.com.

## ນະໂຍບາຍຄວາມເປັນສ່ວນຕົວ

ອົງການດູແລສຸຂະພາບຂອງລັດວໍຊິງຕັນເຄົາລົບຄວາມເປັນສ່ວນຕົວຂອງທ່ານ.
ພວກເຮົາຈະພຽງແຕ່ໃຊ້ຂໍ້ມູນທີ່ທ່ານສະໜອງໃຫ້ເພື່ອສົ່ງຂໍ້ຄວາມຂອງທ່ານ. ເຖິງຢ່າງໃດກໍຕາມ,
ພວກເຮົາສະຫງວນສິດໃນການເປີດເຜີຍຂໍ້ມູນໃດໜຶ່ງດັ່ງທີ່ຈໍາເປັນເພື່ອປະຕິບັດກົດໝາຍ, ລະບຽບການ ຫຼື
ຄໍາຮ້ອງຂໍຂອງລັດຖະບານຢູ່ສະເໝີ ເພື່ອຫຼີກລ່ຽງຄວາມຮັບຜິດຊອບ ຫຼື ເພື່ອປົກປ້ອງສິດ ຫຼື ຊັບສິນຂອງພວກເຮົາ.

ເມື່ອທ່ານຕື່ມຂໍ້ມູນໃສ່ແບບຟອມອອນລາຍ ຫຼື ສະໜອງຂໍ້ມູນທີ່ເຊື່ອມໂຍງກັບການບໍລິການຂໍ້ຄວາມໄຮ້ສາຍໃຫ້ແກ່ອົງການ,
ທ່ານເຫັນດີທີ່ຈະສະໜອງຂໍ້ມູນທີ່ຖືກຕ້ອງ, ຄົບຖ້ວນ ແລະ ເປັນຈິງ. ທ່ານເຫັນດີທີ່ຈະບໍ່ໃຊ້ຊື່ປອມ ຫຼື ຊື່ຫຼອກລວງ ຫຼື
ຊື່ທີ່ທ່ານບໍ່ມີອໍານາດໃນການນໍາໃຊ້. ຖ້າພວກເຮົາໃຊ້ດຸນພິນິດຂອງພວກເຮົາເທົ່ານັ້ນ ແລະ ເຊື່ອວ່າຂໍ້ມູນໃດໜຶ່ງບໍ່ເປັນຈິງ, ບໍ່ຖືກຕ້ອງ
ຫຼື ບໍ່ຄົບຖ້ວນ, ພວກເຮົາອາດປະຕິເສດໃຫ້ທ່ານເຂົ້າເຖິງການບໍລິການ ແລະ ຊອກຫາວິທີແກ້ໄຂທາງກົດໝາຍທີ່ເໝາະສົມ.